ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ແຫ່ງ ສປປ ລາວ

ເລກທີ 08 /ລບ
ນະຄອນຫຼວງວຽງຈັນ, ວັນທີ 04.10.2021

# ມະຕິ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍ ການນຳໃຊ້ລົດໄຟຟ້າຢູ່ໃນ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການນຳພາແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງມະຫາພາກ ສະບັບເລກທີ 057/ຄບສພ, ລົງວັນທີ 19 ທັນວາ 2018;
- ອີງຕາມ ແຈ້ງການຫ້ອງວ່າການສູນກາງພັກ ສະບັບເລກທີ 35/ຫສພ, ລົງວັນທີ 03 ສິງຫາ 2021 ເລື່ອງທິດຊີ້ນຳຂອງກົມການເມືອງສູນກາງພັກ ກ່ຽວກັບນະໂຍບາຍ ແລະ ທິດທາງຈັດຕັ້ງປະຕິບັດການຫັນໄປສູ່ການນຳໃຊ້ລົດໄຟຟ້າ;
- ອີງຕາມ ຍຸດທະສາດສົ່ງເສີມການນຳໃຊ້ພະລັງງານສະອາດ ສຳລັບຂະແໜງຄົມມະນາຄົມ-ຂົນສົ່ງ ແຜນພັດທະນາຮອດປີ 2025, ຍຸດທະສາດຮອດປີ 2030 ແລະ ວິໄສທັດ 2050 ທີ່ໄດ້ຮັບຮອງ ແລະ ປະກາດໃຊ້ ຕາມດຳລັດ ສະບັບເລກທີ 231/ນຍ, ລົງວັນທີ 11 ພຶດສະພາ 2020;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021.

## ລັດຖະບານ ຕົກລົງ:

**ມາດຕາ 1** ເຫັນດີຮັບຮອງນະໂຍບາຍ ການນຳໃຊ້ລົດໄຟຟ້າຢູ່ໃນ ສປປ ລາວ ເຊິ່ງມີລາຍລະອຽດລຸ່ມນີ້:

**1.1 ຈຸດປະສົງ ແລະ ລະດັບຄາດໝາຍ**

- ເພື່ອຈັດຕັ້ງຜັນຂະຫຍາຍວາລະວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະມາດຕະການປະຢັດມັດທະຍັດ ແນໃສ່ຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດ ກໍຄືຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ, ຫຼຸດຜ່ອນຄ່າໃຊ້ຈ່າຍ ຂອງຜູ້ຊົມໃຊ້ຍານພາຫະນະ ຫຼຸດຜ່ອນມົນລະພິດຈາກການນຳໃຊ້ລົດ ທີ່ແລ່ນດ້ວຍນ້ຳມັນເຊື້ອໄຟ ແລະ ເປັນການສົ່ງເສີມການນຳໃຊ້ພະລັງງານໄຟຟ້າ ທີ່ ສປປ ລາວ ມີທ່າແຮງໃນການຜະລິດ;
- ສູ້ຊົນຮອດປີ 2025 ໃຫ້ອັດຕາສ່ວນລົດໄຟຟ້າທີ່ຊົມໃຊ້ໃນສັງຄົມ ກວມເອົາຢ່າງໜ້ອຍ 1% ຂອງຈຳນວນພາຫະນະທັງໝົດ; ຮອດປີ 2030 ໃຫ້ກວມເອົາ 30% ຂຶ້ນໄປ.

**1.2 ນະໂຍບາຍຕໍ່ຜູ້ນຳເຂົ້າ ແລະ ຈຳໜ່າຍລົດໄຟຟ້າ:**

1) ເຫັນດີໃຫ້ປະຕິບັດນະໂຍບາຍທີ່ກຳນົດໄວ້ຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ ເພື່ອສົ່ງເສີມທຸລະກິດນຳເຂົ້າ ແລະ ຈຳໜ່າຍລົດໄຟຟ້າ;
2) ລັດຈະບໍ່ຈຳກັດດ້ານໂກຕ້າ ໃນການນຳເຂົ້າລົດໄຟຟ້າ ເພື່ອສົ່ງເສີມໃຫ້ມີການແຂ່ງຂັນລາຄາຕາມກົນໄກຕະຫຼາດ;



4538

3) ລົດໄຟຟ້າທີ່ນໍາເຂົ້າ ແລະ ຈໍາໜ່າຍຢູ່ ສປປ ລາວ ຕ້ອງຮັບປະກັນດ້ານຄຸນນະພາບ, ຄວາມປອດໄພດ້ານເຕັກນິກ ຕາມມາດຕະຖານສາກົນ, ມີສູນບໍລິການຫຼັງການຂາຍ, ສ້ອມແປງ ແລະ ປ່ຽນຖ່າຍອຸປະກອນຕ່າງໆ ລວມທັງມີລະບົບກໍາຈັດ-ຈັດການໝໍ້ໄຟ ທີ່ເສື່ອມຄຸນນະພາບ ແລະ ສິ່ງເສດເຫຼືອຈາກກິດຈະການລົດໄຟຟ້າ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມຢ່າງເປັນລະບົບ;

4) ເຫັນດີກໍານົດປ້າຍ ຫຼື ເຄື່ອງໝາຍ ເປັນສັນຍາລັກສະເພາະສໍາລັບລົດໄຟຟ້າ ເພື່ອໃຫ້ເຈົ້າໜ້າທີ່ ແລະ ບຸກຄົນທົ່ວໄປສາມາດຈໍາແນກໄດ້ງ່າຍ.

**1.3 ນະໂຍບາຍສໍາລັບຜູ້ຜະລິດ ແລະ ປະກອບລົດໄຟຟ້າ:**

ລັດສົ່ງເສີມບຸກຄົນ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ສົນໃຈລົງທຶນເຂົ້າໃນການສ້າງໂຮງງານຜະລິດສິ້ນສ່ວນອຸປະກອນ, ອາໄຫຼ່ ແລະ ປະກອບລົດໄຟຟ້າ ເພື່ອສະໜອງພາຍໃນ ແລະ ສົ່ງອອກ ໂດຍການໃຫ້ນະໂຍບາຍເໝາະສົມ ດ້ານພາສີ, ອາກອນການນໍາເຂົ້າ; ສໍາລັບການນໍາເຂົ້າອຸປະກອນ ແລະ ສິ້ນສ່ວນອາໄຫຼ່ເພື່ອປະກອບເປັນລົດໄຟຟ້າ, ຜ່ອນຜັນອາກອນກໍາໄລ ແລະ ຄ່າເຊົ່າສໍາປະທານທີ່ດິນຂອງລັດ ໃຫ້ແກ່ຜູ້ປະກອບການໂດຍສອດຄ່ອງກັບກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**1.4 ນະໂຍບາຍຕໍ່ຜູ້ບໍລິການດ້ານຕ່າງໆກ່ຽວພັນກັບລົດໄຟຟ້າ**

1) ລັດສົ່ງເສີມບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ຈະລົງທຶນພັດທະນາສະຖານີບໍລິການສາກລົດໄຟຟ້າ ໂດຍລັດມີນະໂຍບາຍ ລຸ່ມນີ້:

- ຍົກເວັ້ນ ຫຼື ຜ່ອນຜັນພາສີການນໍາເຂົ້າອຸປະກອນ ແລະ ລະບົບສະຖານີບໍລິການສາກລົດໄຟຟ້າ;
- ກໍານົດໂຄງສ້າງລາຄາໄຟຟ້າ ສໍາລັບສະຖານີບໍລິການສາກລົດໄຟຟ້າ ຢ່າງສົມເຫດສົມຜົນທີ່ສະທ້ອນໃຫ້ເຫັນຕົ້ນທຶນ ແລະ ຄວາມຄຸ້ມຄ່າການລົງທຶນ ຂອງຜູ້ໃຊ້ບໍລິການ;
- ໃຫ້ຄວາມສະດວກ ໃນການຕິດຕັ້ງສະຖານີສາກລົດໄຟຟ້າ ແຕ່ລະປະເພດຢູ່ຕາມສະຖານທີ່ຕ່າງໆໃນຕົວເມືອງໃຫຍ່, ຊົນນະບົດ ແລະ ຕາມເສັ້ນທາງຫຼວງແຫ່ງຊາດ ໃນຂອບເຂດທົ່ວປະເທດ;
- ຊຸກຍູ້ບັນດາຜູ້ປະກອບການທຸລະກິດ ປໍ້ານໍ້າມັນເຊື້ອໄຟ ໃຫ້ຫັນມາພັດທະນາສະຖານີບໍລິການສາກລົດໄຟຟ້າ ເທື່ອລະກ້າວ.

2) ລັດມີນະໂຍບາຍດ້ານໂຄງສ້າງລາຄາໄຟຟ້າ ສໍາລັບສະຖານີບໍລິການສາກລົດໄຟຟ້າ ດັ່ງນີ້:

- ໃຫ້ກໍານົດໂຄງສ້າງຮ່າງລາຍຈ່າຍທີ່ເໝາະສົມ ສໍາລັບຜູ້ພັດທະນາສະຖານີບໍລິການສາກລົດໄຟຟ້າ, ເຊິ່ງປະກອບມີ: ຄ່າສ້ອມແປງ ແລະ ຄ່າບູລະນະທາງຫຼວງ (ກອງທຶນທາງ), ກອງທຶນສົ່ງເສີມ ແລະ ພັດທະນາພະລັງງານ, ຕົ້ນທຶນ ແລະ ຄ່າບໍລິຫານ ຂອງຜູ້ປະກອບການສໍາລັບລະບົບກະແສສະຫຼັບ ແລະ ລະບົບສາກກະແສກົງ ຕາມຄວາມເໝາະສົມ ແລະ ອາກອນມູນຄ່າເພີ່ມ;
- ໃຫ້ລັດວິສາຫະກິດໄຟຟ້າລາວ ກໍານົດໂຄງຮ່າງລາຄາໄຟຟ້າທີ່ສະໜອງ ໃຫ້ຜູ້ພັດທະນາສະຖານີສາກລົດໄຟຟ້າ ໃນລາຄາຕາມລະດູການ (ລະດູຝົນ ຖືກກວ່າລະດູແລ້ງ).

3) ລັດມີນະໂຍບາຍສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນສ້າງສູນບໍລິການປ່ຽນຖ່າຍອາໄຫຼ່ລົດໄຟຟ້າ ໂດຍຜູ້ປະກອບການທຸລະກິດການບໍລິການ ປ່ຽນຖ່າຍອາໄຫຼ່ລົດໄຟຟ້າ ຕ້ອງມີລະບົບການບໍລິຫານຈັດການສິ່ງເສດເຫຼືອ ຈາກການປ່ຽນຖ່າຍອຸປະກອນ ຂອງລົດໄຟຟ້າໂດຍສະເພາະໝໍ້ໄຟເສື່ອມຄຸນນະພາບ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກໍາ ນົດໄວ້.

**1.5 ນະໂຍບາຍຕໍ່ຜູ້ຊົມໃຊ້ລົດໄຟຟ້າ:**

1) ລັດວິສາຫະກິດໄຟຟ້າລາວ ເປັນຜູ້ບໍລິການຕິດຕັ້ງໄຟຟ້າ ສໍາລັບເຄື່ອງສາກລົດໄຟຟ້າ ໂດຍບໍ່ເກັບຄ່າໝໍ້ນັບໄຟຢູ່ຕາມທີ່ຢູ່ອາໃສ, ສໍານັກງານ-ອົງການ ເພື່ອຮັບປະກັນຄວາມປອດໄພທາງດ້ານເຕັກນິກ;
2) ເສຍຄ່າທໍານຽມທາງປະຈໍາປີຕໍ່າກວ່າລົດແລ່ນດ້ວຍນໍ້າມັນເຊື້ອໄຟຢ່າງໜ້ອຍ 30% ຕາມກໍາລະນີຄວາມແຮງທຽບເທົ່າກັນ;
3) ໃຫ້ບູລິມະສິດບ່ອນຈອດລົດໄຟຟ້າຕາມຈຸດ ຫຼື ສະຖານທີ່ບໍລິການສາກລົດໄຟຟ້າ ຢູ່ສະຖານທີ່ສາທາລະນະ.

**ມາດຕາ 2 ເປົ້າໝາຍໃນການນໍາໃຊ້ລົດໄຟຟ້າ ໃນໄລຍະທົດລອງ**

2.1 ລັດຖະບານເປັນຜູ້ນໍາໜ້າ ແລະ ຕົວແບບໃນການນໍາໃຊ້ລົດໄຟຟ້າ ໂດຍສະເພາະເລີ່ມຈາກລົດບໍລິຫານລັດ, ລົດປະຈໍາຕໍາແໜ່ງທີ່ຈະຊື້ໃໝ່ ແມ່ນໃຫ້ຈັດຊື້ລົດໄຟຟ້າທັງໝົດ ຈາກນັ້ນຈຶ່ງຊຸກຍູ້ບັນດາວິສາຫະກິດຂອງລັດ, ລົດຂົນສົ່ງສາທາລະນະ ໃຫ້ຫັນມານໍາໃຊ້ລົດໄຟຟ້າເທື່ອລະກ້າວ;

2.2 ຊຸກຍູ້ສົ່ງເສີມອົງການຈັດຕັ້ງພາກລັດ ແລະ ເອກະຊົນ, ຕະຫຼອດຮອດບຸກຄົນທົ່ວໄປ ຕາມຕົວເມືອງໃຫຍ່, ຊານເມືອງ ແລະ ຕາມເສັ້ນທາງຫຼວງແຫ່ງຊາດ ໃຫ້ຫັນມານໍາໃຊ້ລົດໄຟຟ້າ ຕາມເງື່ອນໄຂຄວາມສາມາດ ຂອງຕົນແຕ່ລະກ້າວ.

**ມາດຕາ 3 ທິດຊີ້ນໍາລວມໃນການຈັດຕັ້ງປະຕິບັດ**

3.1 ບັນດາກະຊວງທີ່ກ່ຽວຂ້ອງຕ້ອງເປັນເຈົ້າການຮັບຜິດຊອບ, ຜັນຂະຫຍາຍນະໂຍບາຍອອກເປັນນິຕິກໍາ, ແຜນງານ ໂຄງການລະອຽດເພື່ອສົ່ງເສີມ, ຄຸ້ມຄອງ, ອໍານວຍຄວາມສະ ດວກໃຫ້ແກ່ກິດຈະການ ຫັນໄປສູ່ການນໍາໃຊ້ລົດໄຟຟ້າ ໃຫ້ເປັນຮູບປະທໍາຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ດັ່ງນີ້:

1) ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່: ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນຈັດຕັ້ງປະຕິບັດຕົວຈິງ ໃນການຫັນໄປສູ່ການນໍາໃຊ້ລົດໄຟຟ້າ, ສ້າງນິຕິກໍາທີ່ກ່ຽວຂ້ອງກັບສະຖານີສາກລົດໄຟຟ້າ, ກໍານົດໂຄງສ້າງລາຄາໄຟຟ້າສໍາລັບທີ່ຢູ່ອາໃສ ແລະ ການສາກລົດໄຟຟ້າແບບສາທາລະນະ ໃຫ້ແກ່ຜູ້ພັດທະນາສະຖານີສາກລົດໄຟຟ້າ ແລະ ຜູ້ຊົມໃຊ້ ມີລັກສະນະສົ່ງເສີມ ແລະ ຈູງໃຈ ເພື່ອໃຫ້ມີການນໍາໃຊ້ລົດໄຟຟ້າແບບແຜ່ຫຼາຍເປັນວົງກວ້າງ, ຄວາມຄຸ້ມຄ່າທາງດ້ານເສດຖະກິດ, ປະຊາຊົນມີຄ່າໃຊ້ຈ່າຍຕໍ່າກວ່າລົດແລ່ນດ້ວຍນໍ້າມັນເຊື້ອໄຟ ແລະ ອື່ນໆ ຕາມພາລະບົດບາດຂອງຂະແໜງການ;
2) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ: ເປັນເຈົ້າການຄົ້ນຄວ້າດ້ານລະບຽບການ ກ່ຽວກັບການກໍານົດມາດຕະຖານເຕັກນິກຄວາມປອດໄພ ຂອງລົດໄຟຟ້າ ໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ ທີ່ ສປປ ລາວ ເປັນພາຄີແຕ່ລະໄລຍະ, ຢັ້ງຢືນດ້ານມາດຕະຖານເຕັກນິກສໍາລັບການນໍາເຂົ້າ, ປະກອບ (ຜະລິດ) ພາຍໃນ, ກໍານົດກົນໄກການຂຶ້ນທະບຽນ, ກວດກາສະພາບເຕັກນິກ, ອອກແບບປ້າຍທະບຽນ ຫຼື ເຄື່ອງໝາຍຂອງລົດໄຟຟ້າ ແລະ ໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ;
3) ໃຫ້ກະຊວງການເງິນ: ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງລະບຽບການ ແລະ ກົນໄກ ໃນການໃຫ້ນະໂຍບາຍດ້ານພາສີ, ອາກອນ ແລະ ຄ່າທໍານຽມຕ່າງໆ ທີ່ຕິດພັນກັບການສົ່ງເສີມສໍາລັບທຸລະກິດກ່ຽວກັບລົດໄຟຟ້າ ແລະ ສະຖານີສາກລົດໄຟຟ້າ, ອຸປະກອນ ແລະ ສິ້ນສ່ວນ ເພື່ອຜະລິດລົດໄຟຟ້າ ແລະ ອື່ນໆ ຕາມພາລະບົດບາດຂອງຂະແໜງການ;
4) ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ: ເປັນເຈົ້າການກໍານົດນິຕິກໍາ ແລະ ກົນໄກທີ່ອໍານວຍຄວາມສະດວກ ໃຫ້ຜູ້ປະກອບການ ທີ່ດໍາເນີນທຸລະກິດ, ການນໍາເຂົ້າ, ຈໍາໜ່າຍ ລົດໄຟຟ້າ, ອຸປະກອນລົດໄຟຟ້າ ແລະ ຜະລິດສິ້ນສ່ວນອຸປະກອນລົດໄຟຟ້າ ເພື່ອສົ່ງເສີມ, ຄຸ້ມຄອງ, ກວດກາການນໍາເຂົ້າ, ການຈໍາໜ່າຍ, ຜະລິດສິ້ນສ່ວນ, ປະກອບ ລົດໄຟຟ້າ ແລະ ອຸປະກອນ

ສະຖານີສາກລົດໄຟຟ້າ ລວມທັງການຄວບຄຸມລາຄາຈຳໜ່າຍລົດໄຟຟ້າຢູ່ພາຍໃນ ຕາມພາລະບົດບາດ ຂອງຂະແໜງການ;

5) ໃຫ້ກະຊວງປ້ອງກັນຄວາມສະຫງົບ: ເປັນເຈົ້າການປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການຜະລິດ ແລະ ຕິດປ້າຍ ຂອງລົດໄຟຟ້າ ຫຼື ເຄື່ອງໝາຍສຳລັບລົດໄຟຟ້າ ເພື່ອໃຫ້ເຈົ້າໜ້າທີ່ ແລະ ສັງຄົມ ຈຳແນກໄດ້ງ່າຍ, ການຄຸ້ມຄອງໃນການຈະລາຈອນ ເພື່ອຄວາມປອດໄພໃນການຂັບຂີ່ ແລະ ອື່ນໆ ຕາມພາລະບົດບາດຂອງຂະແໜງການ;

6) ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ເປັນເຈົ້າການ, ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກຳນົດຂໍ້ແນະນຳ ເພື່ອກຳຈັດ, ຈັດການກັບໝໍ້ໄຟທີ່ເສື່ອມຄຸນນະພາບ ແລະ ສິ່ງເສດເຫຼືອຈາກກິດຈະການລົດໄຟຟ້າ, ອຳນວຍຄວາມສະດວກໃນກິດຈະການໂຄງການພັດທະນາລົດໄຟຟ້າ ແລະ ສະຖານີສາກລົດໄຟຟ້າ ທີ່ມີຈຸດປະສົງຈະເຂົ້າຫາແຫຼ່ງທຶນທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ, ການພັດທະນາສີຂຽວ ແລະ ການຊື້-ຂາຍກາກບອນຕາມກົນໄກການພັດທະນາທີ່ສະອາດ ແລະ ອື່ນໆ ຕາມພາລະບົດບາດຂອງຂະແໜງການ.

3.2 ມອບໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນອອກຄຳແນະນຳ ຫຼື ລະບຽບການຕາມການແບ່ງຄວາມຮັບຜິດຊອບໃນຂໍ້ 3.1 ຂ້າງເທິງ ໃຫ້ສຳເລັດພາຍໃນ 45 ວັນນັບແຕ່ມື້ມະຕິສະບັບນີ້ ມີຜົນສັກສິດ.

3.3 ບັນດາກະຊວງ, ອົງການລັດທຽບເທົ່າ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້,ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດມະຕິ ສະບັບນີ້ ໃຫ້ປະກົດຜົນເປັນຈິງ.

3.4 ມອບໃຫ້ທ່ານ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ເປັນຜູ້ຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມຄວາມຮັບຜິດຊອບຂອງຕົນ ແລ້ວລາຍງານທ່ານນາຍົກລັດຖະມົນຕີ ຊາບເປັນປົກກະຕິ.

**ມາດຕາ 4** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ